**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

------------------

ແຂວງຫຼວງນ້ຳທາ

ຄະນະຄຸ້ມຄອງດ່ານສາກົນບໍ່ເຕັນ

ເລກທີ:..001../ຄດບ.

ຫຼວງນ້ຳທາ,ວັນທີ:..5..ມັງກອນ.2022

# ແຈ້ງການ

**ເຖິງ:** ບັນດາຂະແໜງການຂອງລັດ, ທະນາຄານພັດທະນາລາວ (ໜ່ວຍງານ Easy pass), ຕົວແທນການຂາຍປະກັນໄພ ທີ່ປະຈຳຢູ່ດ່ານສາກົນບໍ່ເຕັນ.

**ເລື່ອງ:** ປະຕິບັດໂມງເວລາປະຈຳການ.

- ອີງຕາມ ດຳລັດ 558/ລບ, ລົງວັນທີ 31.12.2018 ວ່າດ້ວຍດ່ານຊາຍແດນ ແລະ ສະໜາມບິນສາກົນ;
- ອີງຕາມ ຂໍ້ຕົກລົງ ຂອງທ່ານເຈົ້າແຂວງຫຼວງນ້ຳທາ ສະບັບເລກທີ 104/ຈຂ, ລົງວັນທີ 11 ກຸມພາ 2020 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຄຸ້ມຄອງດ່ານສາກົນບໍ່ເຕັນ;
- ອີງຕາມ ການລາຍງານແບບປາກເປົ່າ(ໂທລະສັບ) ຈາກຜູ້ປະສານງານເບື້ອງຈີນ ໃນຄັ້ງວັນທີ 5/1/2022.

ຄະນະຄຸ້ມຄອງດ່ານສາກົນບໍ່ເຕັນ ຂໍຖືເປັນກຽດແຈ້ງມາຍັງບັນດາ ຂະແໜງການຂອງລັດ, ທະນາຄານພັດທະນາລາວ(ໜ່ວຍງານ Easy pass), ຕົວແທນການຂາຍປະກັນໄພ ທີ່ປະຈຳຢູ່ດ່ານສາກົນບໍ່ເຕັນ ຊາບວ່າ: ນັບແຕ່ວັນທີ 5 ມັງກອນ 2022 ເປັນຕົ້ນໄປ (ຈົນກ່ວາຈະມີການປ່ຽນແປງ) ດ່ານສາກົນບໍ່ເຕັນ - ດ່ານສາກົນບໍ່ຫານ ມີການປັບເວລາ ແລະ ການຈັດຮູບແບບການປ່ອຍລົດບັນທຸກເຂົ້າ-ອອກ ດັ່ງນີ້:

- ເວລາ 7:30 - 16:30 ປ່ອຍລົດບັນທຸກໜັກ (ລົດແກ່ສິນຄ້າ).
- ເວລາ 16:30 – 20:30 ແມ່ນປ່ອຍລົດເປົ່າ (ລົດບໍ່ແກ່ສິນຄ້າ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດການປະຈຳການຕາມເວລາທີ່ລະບຸຂ້າງເທິງນີ້ຢ່າງເຂັ້ມງວດ.

**ຫົວໜ້າຄະນະຄຸ້ມຄອງດ່ານສາກົນບໍ່ເຕັນ**

ຄະນະຄຸ້ມຄອງ
ດ່ານສາກົນບໍ່ເຕັນ

**ຄຳຕຸ່ນ ບຸນລຽນຂັນ**

Khamtoun BOUNLIENKHAN

สแกนด้วย CamScanner